ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ອົງການໄອຍະການປະຊາຊົນສູງສຸດ
ກົມຕິດຕາມກວດກາການດຳເນີນຄະດີແພ່ງ

ເລກທີ.141../ອອປສ.ກຕພ
ນະຄອນຫຼວງວຽງຈັນ, ວັນທີ 6 ເມສາ 2017

ບົດສະຫຼຸບປະຈຳເດືອນ 03/2017
ໃນການເຄື່ອນໄຫວວຽກງານຮອບດ້ານ ຂອງກົມຕິດຕາມກວດກາ ການດຳເນີນຄະດີແພ່ງ ແລະ ທິດທາງແຜນການເຄື່ອນໄຫວວຽກໃນເດືອນ 04/2017

- ອີງຕາມ ທິດທາງແຜນການເຄື່ອນໄຫວວຽກງານປະຈຳເດືອນ ຂອງອົງການໄອຍະການປະຊາຊົນສູງສຸດ;
- ອີງຕາມ ແຜນການເຄື່ອນໄຫວວຽກງານໃນເດືອນ **03/2017** ຂອງກົມຕິດຕາມກວດກາການດຳເນີນຄະດີແພ່ງ.

ຜ່ານການເຄື່ອນໄຫວວຽກງານ ຂອງກົມຕິດຕາມກວດກາການດຳເນີນຄະດີແພ່ງໃນໄລຍະໜຶ່ງເດືອນຜ່ານມາສາມາດສະຫຼຸບໄດ້ດັ່ງນີ້:

I. ດ້ານການເມືອງ-ແນວຄິດ

ໄດ້ເອົາໃຈໃສ່ສຶກສາອົບຮົມແນວຄິດໃຫ້ແກ່ອ້າຍ,ນ້ອງພະນັກງານພາຍໃນກົມໃຫ້ອຸ່ນອ່ຽນ, ທຸ່ນທ່ຽງ, ມີຄວາມໜັກແໜ້ນທາງດ້ານການເມືອງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີຄວາມບຸກບືນຫ້າວຫັນຕໍ່ໜ້າທີ່ວຽກງານ, ປະຕິບັດໜ້າທີ່ວຽກງານດ້ວຍຄວາມບໍລິສຸດສັດຊື່, ປອດໄສຂາວສະອາດ ແລະ ເພີ່ມທະວີຄວາມສາມັກຄີຮັກແພງຊ່ວຍເຫຼືອເຊິ່ງກັນ ແລະ ກັນລະຫວ່າງອ້າຍ, ເອື້ອຍນ້ອງພະນັກງານພາຍໃນກົມ ແລະ ພາຍນອກໄດ້ດີ.

II. ຜົນງານແລະການເຄື່ອນໄຫວວຽກງານ ໃນໜຶ່ງເດືອນຜ່ານມາ

1. ຫົວໜ້າກົມ ຮ່ວມປະຊຸມກວດກາ 0 ໂມງ ໃນວັນທີ 2/3/2017;
2. ຫົວໜ້າກົມ ເຂົ້າຮ່ວມປະຊຸມວຽກງານການເງິນໃນວັນທີ 9/3/217;
3. ຫົວໜ້າກົມ ເຂົ້າຮ່ວມປຶກສາຫາລືຄະດີຊັນນຳຢູ່ກະຊວງການຕ່າງປະເທດ ວັນທີ 23/3/2017;
4. ຫົວໜ້າກົມ ເຂົ້າຮ່ວມປະຊຸມກັບຄະນະນຳ, ຫົວໜ້າກົມ, ຫົວໜ້າຫ້ອງການ, ສະຖາບັນ ແລະ ອົງການໄອຍະການປະຊາຊົນພາກກາງ ກັບຄະນະຮັບຜິດຊອບປັບປຸງກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ໃນວັນທີ 27/3/2017;
5. ຮອງຫົວໜ້າກົມແພ່ງ (ທ່ານ ໄຊຊະນະ ລາດຊະວົງ) ໄດ້ໄປປະຊຸມຕາມການເຊີນຂອງກຳມາທິການຍຸຕິທຳສະພາແຫ່ງຊາດ, ໄດ້ເຂົ້າຮ່ວມກອງປະຊຸມສຳມະນາແລກປ່ຽນບົດຮຽນກ່ຽວກັບການດຳເນີນຄະດີອາຍາຂອງປະເທດເຢຍລະມັນ ແລະ ໄດ້ເຂົ້າຮ່ວມຄະດີສະເພາະກິດ;
6. ຮອງຫົວໜ້າກົມແພ່ງ (ທ່ານ ບົວລີ ເພັດມີໄຊ) ໄປຝຶກອົບຮົມຢູ່ປະເທດຍີ່ປຸ່ນກ່ຽວກັບການເຜີຍແຜ່ຮ່າງປະມວນກົດໝາຍແພ່ງຂອງລາວ 8 ວັນ, ຝຶກອົບຮົມການຂຽນປຶ້ມຄູ່ມືກົດໝາຍແພ່ງ ແລະ ເສດຖະກິດຢູ່ແຂວງ ວຽງຈັນ 2 ວັນ ແລະ ປະຊຸມຢູ່ຫ້ອງການໄຈກາ (ສີເມືອງ);

7. ຄະນະກົມແພ່ງ, ຫົວໜ້າພະແນກ ແລະ ວິຊາການຈຳນວນໜຶ່ງ ໄດ້ລົງໄປຈັດຝຶກອົບຮົມວຽກງານຄະດີແພ່ງ ຢູ່ແຂວງ ສາລະວັນ ໃຫ້ບັນດາ ໄອຍະການແຂວງ ແລະ ເຂດ ຄື: ແຂວງຄຳມ່ວນ, ແຂວງສະຫວັນນະເຂດ, ແຂວງຈຳປາສັກ, ແຂວງອັດຕະປື ແລະ ແຂວງເຊກອງ ຈຳນວນ 3 ວັນ (ແຕ່ວັນທີ 13-15/2017);
8. ຄະນະກົມແພ່ງ ແລະ ພະນັກງານພາຍໃນກົມທຸກທ່ານ ເຂົ້າຮ່ວມຮັບຟັງປະຖະກະຖາວັນສ້າງຕັ້ງພັກປະຊາຊົນ ປະຕິວັດລາວ;
9. ຫົວໜ້າພະແນກຕິດຕາມກວດກາການດຳເນີນຄະດີການຄ້າ, ຄອບຄົວ ແລະ ເດັກ ໄປປະຊຸມຢູ່ທ່າລາດ ກ່ຽວກັບການ ຂຽນປຶ້ມຄູ່ອາຍາ ວັນທີ 9-11. ຮອງພະແນກ ໄປປະຊຸມຢູ່ກະຊວງຍຸຕິທຳ ກ່ຽວກັບການຂຽນປຶ້ມຄູ່ມືການໄກ່ເກ່ຍ ຄະດີເດັກ ວັນທີ 7. ຮອງພະແນກ ພ້ອມວິຊາການ ລົງເກັບກຳຂໍ້ມູນຢູ່ບ້ານປະກະເຮດ, ເມືອງນາຊາຍທອງ ແລະ ເກັບກຳຂໍ້ມູນຢູ່ ບໍລິສັດປິໂຕລຽມ;
10. ຮອງຫົວໜ້າພະແນກຕິດຕາມກວດກາການດຳເນີນຄະດີຂັ້ນຮື້ຟື້ນ ພ້ອມດ້ວຍວິຊາການ ລົງເກັບກຳຂໍ້ມູນຢູ່ບ້ານນາ ແຖ.
11. ຂາເຂົ້າ-ຂາອອກຂອງກົມ ຮັບຄະດີເຂົ້າໃໝ່ ແລະ ສົ່ງອອກສຳນວນຄະດີອອກໃນໜຶ່ງເດືອນຜ່ານມາມີດັ່ງນີ້:

- ສຳນວນຄະດີຂັ້ນລົບລ້າງ, ຄຳຮ້ອງຂໍຮື້ຟື້ນ, ສຳນວນທວງມາ ແລະ ຂໍ້ຕົກລົງສະພາ ເຂົ້າໃໝ່ເລີ່ມແຕ່ ວັນທີ 01-29 ເມສາ 2017 ມີທັງໝົດ = 27 ເລື່ອງ;
- ຄະນະກົມຄົ້ນຄ້ວາ, ແກ້ໄຂແລ້ວ ແລະ ສົ່ງເລຂາເຂົ້າເຊັນຄະນະນຳ ອອປສ = 31 ເລື່ອງ;
- ສົ່ງສຳນວນອອກໃນເດືອນນີ້ທັງໝົດ = 24 ເລື່ອງ;
- ຊ່ວຍວຽກຄະນະກົມ ເຮັດບົດສະຫຼຸບປະຈຳເດືອນ, ປະຈຳໄຕມາດ, ປະຈຳປີ ແລະ ເຮັດວຽກບໍລິຫານຕ່າງໆຢູ່ພາຍ ໃນກົມຕາມມອບໝາຍ.

III. ການແກ້ໄຂວຽກງານດ້ານວິຊາສະເພາະ(ເລີ່ມແຕ່ ວັນທີ 01-29 ມີນາ 2017)

1./ ສຳນວນຄະດີຂັ້ນລົບລ້າງ

- ຄະດີເກົ່າຄ້າງມາແຕ່ເດືອນ 2/2017 = 14 ເລື່ອງ;
- ຄະດີເຂົ້າໃໝ່ໃນເດືອນ 3/2017 = 7 ເລື່ອງ;
- ລວມທັງໝົດ = 21 ເລື່ອງ;

- ແກ້ໄຂສົ່ງອອກໃນເດືອນ = 13 ເລື່ອງ. ໃນນີ້: - ຖະແຫຼງ ຢ/ຢ : 6 ເລື່ອງ;
  - ຖະແຫຼງ ປ/ປ : 7 ເລື່ອງ.
- **ຍັງພວມຄົ້ນຄວ້າ = 8 ເລື່ອງ.**

2./ ສຳນວນຄະດີທວງມາ (ທວງຕາມຂໍ້ຕົກລົງສະພາ ແລະ ທວງຕາມຄຳຮ້ອງຂໍຮື້ຟື້ນ)

- ຄ້າງມາແຕ່ເດືອນ 2/2017 = 73 ເລື່ອງ, ໃນນີ້: - ສຳນວນທວງຕາມ ຂ/ຕ : 53 ເລື່ອງ;
  - ສຳນວນທວງຕາມຄຳຮ້ອງ: 20 ເລື່ອງ.
- ເຂົ້າໃໝ່ໃນເດືອນ 3/2017 = 9 ເລື່ອງ. ໃນນີ້: - ສຳນວນທວງຕາມ ຂ/ຕ: 2 ເລື່ອງ;
  - ສຳນວນທວງຕາມຄຳຮ້ອງ: 7 ເລື່ອງ.
- ລວມທັງໝົດ = 82 ເລື່ອງ.

- ແກ້ໄຂແລະສົ່ງອອກ = 3 ເລື່ອງ, **ໃນນີ້** - ສະເໜີຮື້ຟື້ນຕາມຂໍ້ຕົກລົງສະພາ: 0 ເລື່ອງ,
  ໃນນີ້: ສະເໜີຮື້ຟື້ນຕາມຄຳຮ້ອງ: 0 ເລື່ອງ;

- ຄຳຕົກລົງບໍ່ຮື້ຟື້ນ: 1 ເລື່ອງ, ໃນນີ້: ຕາມຂໍ້ຕົກລົງສະພາ: 2 ເລື່ອງ.

- ຍັງພວມຄົ້ນຄວ້າ = 79 ເລື່ອງ.ໃນນີ້: - ສຳນວນທວງຕາມ ຂ/ຕ: 53 ເລື່ອງ;
- ສານວນທວງຕາມຄຳຮ້ອງ: 26 ເລື່ອງ.

3./ ຄຳຮ້ອງຂໍຮື້ຟື້ນ ແລະ ຄຳຮ້ອງຂໍຄວາມເປັນທຳ

- ຄ້າງມາແຕ່ເດືອນ 2/2017 = 0 ເລື່ອງ;
- ຄຳຮ້ອງເຂົ້າໃໝ່ໃນເດືອນ 3/2017 = 13 ເລື່ອງ;
- ລວມທັງໝົດ = 13 ເລື່ອງ;
- ແກ້ໄຂແລະສົ່ງອອກ = 8 ເລື່ອງ, ໃນນີ້: - ທວງສຳນວນ : 3 ເລື່ອງ;
  - ຕົກລົງບໍ່ຮື້ຟື້ນ : 4 ເລື່ອງ;
  - ສັ່ງໃຫ້ກົມອື່ນແກ້ໄຂ: 1 ເລື່ອງ.

- ຍັງພວມຄົ້ນຄວ້າ = 5 ເລື່ອງ.

4./ ຂໍ້ຕົກລົງສະພາແຫ່ງຊາດ (ທີ່ຍັງບໍ່ທັນໄດ້ທວງສຳນວນຄະດີ).

- ຄ້າງມາແຕ່ເດືອນ 2/2017 = 1 ເລື່ອງ;
- ຮັບເຂົ້າໃໝ່ໃນເດືອນ 3/2017 = 0 ເລື່ອງ;
- ລວມທັງໝົດ = 1 ເລື່ອງ;
- ແກ້ໄຂສົ່ງອອກ = 0 ເລື່ອງ;
- **ຍັງພວມຄົ້ນຄວ້າ = 1 ເລື່ອງ.**

ສັງລວມຄະດີ ແລະ ຄຳຮ້ອງທັງໝົດ :

- ຄະດີ ແລະ ຄຳຮ້ອງຄ້າງມາແຕ່ເດືອນ 2/2017 = 90 ເລື່ອງ;
- ຄະດີຮັບເຂົ້າໃໝ່ໃນເດືອນ 3/2017 = 27 ເລື່ອງ;
- ລວມທັງໝົດ = 117 ເລື່ອງ;
- ກົມຄົ້ນຄວ້າ ແລະຄະນະນຳເຊັນ, ສົ່ງອອກແລ້ວ = 24 ເລື່ອງ;ໃນນີ້: - ສະເໜີຮື້ຟື້ນຕາມຂ/ຕ 0 ເລື່ອງ;
  ສະເໜີຮື້ຟື້ນຕາມຄ/ຮ 0 ເລື່ອງ.
- ຍັງຄ້າງ = 93 ເລື່ອງ, (ໃນນີ້: ເອົາເຂົ້າເຊັນການນຳ: 9 ເລື່ອງ);
  (ຄ້າງກວດຄະນະກົມ : 9 ເລື່ອງ);
  (ຄ້າງນຳວິຊາການ : 75 ເລື່ອງ).

IV. ວຽກງານທີ່ໄດ້ຈັດຕັ້ງປະຕິບັດໄດ້ ແລະ ວຽກທີ່ບໍ່ສາມາດຈັດຕັ້ງປະຕິບັດໄດ້ຕາມແຜນການ.

ກ. ວຽກທີ່ຈັດຕັ້ງປະຕິບັດໄດ້

1. ສຶກສາອົບຮົມວຽກງານແນວຄິດ, ເຕົ້າໂຮມຄວາມສາມັກຄີພະນັກງານພາຍໃນກົມ;
2. ຜ່ານຄະດີນຳຄະນະນຳ ໄດ້ 1 ຄັ້ງ, (ຄົ້ນຄວ້າຄະດີ 9 ເລື່ອງ);
3. ຜ່ານຄະດີຂັ້ນກົມ ໄດ້ 3 ຄັ້ງ, (ຄົ້ນຄວ້າຄະດີ 12 ເລື່ອງ);
4. ຜ່ານຄະດີພະແນກກວດກາຄະດີຂັ້ນຮື້ຟື້ນ ໄດ້ 4 ຄັ້ງ, (ຄົ້ນຄວ້າຄະດີ 12 ເລື່ອງ);
5. ຜ່ານຄະດີພະແນກການຄ້າຄອບຄົວ, ການຄ້າແລະ ເດັກ ໄດ້ 4 ຄັ້ງ, (ຄົ້ນຄວ້າຄະດີ 6 ເລື່ອງ);
6. ຜ່ານຄະດີພະແນກຕິດຕາມກວດກາຄະດີແພ່ງ ໄດ້ 3 ຄັ້ງ, (ຄົ້ນຄວ້າຄະດີ 3 ເລື່ອງ);
7. ສາມາດແກ້ໄຂຄະດີ, ຄຳຮ້ອງໄດ້ບັນລຸຕາມຄາດໝາຍທີ່ວາງໄວ້ຄືເຫຼືອ 2 ຕົວເລກ.

ຂ. ວຽກທີ່ບໍ່ສາມາດຈັດຕັ້ງປະຕິບັດໄດ້ຕາມແຜນການ

1. ການຜ່ານຄະດີຮ່ວມກັບຄະນະນຳ ແລະ ຫຼາຍພາກສ່ວນ ບໍ່ສາມາດປະຕິບັດໄດ້ຕາມແຜນການ 2 ຄັ້ງຕໍ່ເດືອນ.

V. ຈຸດດີ, ຈຸດອ່ອນ ແລະ ຂໍ້ຄົງຄ້າງ

ກ. ຈຸດດີ

-ສາມາດເຕົ້າໂຮມຄວາມສາມັກຄີ ແລະ ພະນັກງານແຕ່ລະຄົນມີແນວຄິດອຸ່ນອ່ຽນ, ທຸ່ນທ່ຽງດີ ແລະ ໄດ້ປະກອບສ່ວນເຂົ້າໃນວຽກງານວິຊາສະເພາະ ແລະ ຂະບວນການອື່ນໆ ທີ່ທາງການຈັດຕັ້ງມອບໝາຍໃຫ້ຢ່າງຈູບຈ້າວຫ້າວຫັນ;

-ຄະນະກົມໄດ້ປັບປຸງແບບແຜນວິທີເຮັດວຽກໂດຍສ້າງເປັນແຜນການເຄື່ອນໄຫວຂອງກົມຢ່າງລະອຽດຈະແຈ້ງແລະ ພະແນກນຳນຳໄປຜັນຂະຫຍາຍເຂົ້າໃນວຽກງານຕົວຈິງຢ່າງໄດ້ຮັບຜົນດີ;

-ຄະນະກົມລວມເຖິງການນຳແຕ່ລະພະແນກ ໄດ້ເອົາໃຈໃສ່ນຳພາຜ່ານຄະດີຕາມພາລະບົດບາດຂອງຕົນໄດ້ຕາມແຜນການທີ່ວາງໄວ້;

- ໄດ້ນຳພາຜ່ານຄະດີຂັ້ນກົມ, ຂັ້ນພະແນກໄດ້ຈຳນວນຫຼາຍຄະດີ ຖ້າທຽບໃສ່ເດືອນຜ່ານມາ.

ຂ. ສາເຫດພາໃຫ້ມີຈຸດດີ:

- ມີການຊີ້ນຳໆພາຈາກຄະນະນຳ ອອປສ ຜູ້ຊີ້ນຳຢ່າງໃກ້ສິດ ແລະ ການຊີ້ນຳຂອງຄະນະກົມຢ່າງແທດເຖິງ;

- ຍ້ອນພະນັກງານພາຍໃນກົມກຳແໜ້ນແນວທາງຂອງພັກ ແລະ ມີທັດສະນະຫຼັກແໜ້ນສູງຂຶ້ນກວ່າເກົ່າ ຈຶ່ງເຮັດໃຫ້ການປະຕິບັດໜ້າທີ່ວຽກງານບັນລຸຕາມລະດັບຄາດໝາຍທີ່ວາງໄວ້;

- ມີການວາງແຜນການຈຸດສຸມໃນການຄົ້ນຄວ້າຄະດີ ແລະ ແກ້ໄຂຄຳຮ້ອງຕ່າງໆຢ່າງຈະແຈ້ງ ແລະ ມອບໃຫ້ບຸກຄົນຮັບຜິດຊອບໃນການຈັດຕັ້ງປະຕິບັດ;

- ຄະນະນຳຂອງກົມ, ພະແນກ ລວມເຖິງພະນັກງານວິຊາການເອົາໃຈໃສ່ໃນການຈັດຕັ້ງປະຕິບັດວຽກງານວິຊາສະເພາະ ຕາມການຈັດຕັ້ງມອບໝາຍໃຫ້ຢ່າງພ້ອມພຽງ;

- ຍ້ອນມີຄວາມເຂົ້າໃຈເປັນເອກະພາບກັນ ບັນດາກົດໝາຍທີ່ນຳໃຊ້ເຂົ້າໃນການແກ້ໄຂຄະດີ.

ຄ. ຈຸດຄົງຄ້າງ

- ອີງໃສ່ແຜນການຂອງເດືອນ ຍັງມີບາງວຽກທີ່ຍັງປະຕິບັດບໍ່ໄດ້ຕາມແຜນການ ເຊັ່ນ: ການຜ່ານຄະດີຮ່ວມກັບຄະນະນຳ ແລະ ຫຼາຍພາກສ່ວນ ຍັງປະຕິບັດບໍ່ທັນໄດ້ 2 ຄັ້ງຂຶ້ນໄປ ເຮັດໃຫ້ຄະດີຄ້າງລໍຖ້າຜ່ານຄະນະນຳຍັງມີຕົວເລກສູງ;

- ພະນັກງານຈຳນວນໜຶ່ງ ບໍ່ສາມາດຄົ້ນຄ້ວາຄະດີໄດ້ຕາມຄາດໝາຍ ແລະ ກຳນົດເວລາທີ່ວາງໄວ້.

ງ. ສາເຫດທີ່ພາໃຫ້ມີຈຸດອ່ອນ ແລະ ຂໍ້ຄົງຄ້າງ

- ຄະດີມີຄວາມຫຍຸ້ງຍາກສັບສົນ ຈຳເປັນຕ້ອງໄດ້ເກັບກຳຂໍ້ມູນຄືນໃໝ່ ແລະ ການສະໜອງຂໍ້ມູນຈາກພາກສ່ວນທີ່ກ່ຽວຂ້ອງບໍ່ໄດ້ຕາມເປົ້າໝາຍ ແລະ ກຳນົດເວລາ;

- ມີຄະດີທີ່ຫຍຸ້ງຍາກ ໂດຍສະເພາະແຈ້ງການ ແລະ ຂໍ້ຕົກລົງຂອງຄະນະປະຈຳສະພາແຫ່ງຊາດຈຳນວນໜຶ່ງຕ້ອງໄດ້ນຳເຂົ້າຜ່ານຮ່ວມກັບຄະນະນຳ ອອປສ ແລະ ນຳເຂົ້າຄົ້ນຄວ້າຮ່ວມກັບຫຼາຍພາກສ່ວນບໍ່ໄດ້ຕາມແຜນການທີ່ກຳນົດໄວ້;

- ຍ້ອນພະນັກງານຈຳນວນໜຶ່ງບໍ່ເປັນເຈົ້າການ ໃນການແກ້ໄຂວຽກງານວິຊາສະເພາະ ແລະ ຄະນະນຳກົມກໍຍັງບໍ່ທັນໄດ້ຕິດຕາມກວດກາຢ່າງເລິກເຊິ່ງເຖິງຖອງແທ້.

ຈ. ບົດຮຽນທີ່ຖອດຖອນໄດ້

- ສືບຕໍ່ສ້າງແຜນການຂອງກົມ ແລະ ຕັ້ງໜ້າຈັດຕັ້ງປະຕິບັດຕາມແຜນການທີ່ໄດ້ວາງໄວ້ ແລະ ຈັດວາງເວລາໃຫ້ປະຕິບັດວຽກງານໃຫ້ກົມກຽວເພື່ອເຮັດໃຫ້ການແກ້ໄຂຄະດີໄດ້ຫຼາຍຂຶ້ນ ແລະສູ້ຊົນນຳຄະດີເຂົ້າຜ່ານການນຳ, ຫຼາຍພາກສ່ວນໃຫ້ໄດ້ຕາມແຜນການ ທີ່ວາງໄວ້ໃນແຕ່ລະເດືອນ;

- ປະສານສານສົມທົບກັບພາກສ່ວນກ່ຽວຂ້ອງ ໂດຍສະເພາະ ສະພາແຫ່ງຊາດ ແລະ ສານປະຊາຊົນສູງສຸດ ເພື່ອເປີດກອງປະຊຸມຄົ້ນຄວ້າ, ແກ້ໄຂຄະດີທີ່ຫຍຸ້ງຍາກສັບສົນໃຫ້ຫຼາຍຂຶ້ນກວ່າເກົ່າ;

- **ການກຳນົດວາງແຜນການຈຸດສຸມ**ໃນແຕ່ລະອາທິດ, ຈັດລຽງຄະດີ ແລະ ຄຳຮ້ອງທີ່ຄ້າງຄົນນຳມາ ຄົ້ນຄວ້າ ແລະ **ຜ່ານຂັ້ນພະແນກ, ກົມ,** ຄະນະນຳ ແລະ ຫລາຍພາກສ່ວນ;

- **ຄະນະກົມ ແລະ** ຄະນະພະແນກ ຕ້ອງໄດ້ເອົາໃຈໃສ່ຕິດຕາມກວດກາ ແລະ ຊຸກຍູ້ໃຫ້ພະນັກງານມີຄວາມ **ຫ້າວຫັນ ແລະ** ເອົາໃຈໃສ່ຂຶ້ນຕື່ມ ເພື່ອບັນລຸໄດ້ຄາດໝາຍສູ້ຊົນທີ່ກົມໄດ້ວາງອອກ;

- **ກຳນົດເວລາ**ໃຫ້ວິຊາການນຳເອົາຄະດີຜ່ານພະແນກ, ກົມຢ່າງຄັກແນ່ ເພື່ອບໍ່ໃຫ້ແກ່ຍາວເວລາ ແລະ ຮັບປະກັນກຳ**ນົດເວລາ**ຕາມກົນໄກແກ້ໄຂຄະດີຄົບວົງ;

- ແຕ່ລະພະແນກຕ້ອງສ້າງແຜນການຜ່ານຄະດີປະຈຳອາທິດຂອງຕົນ ແລະ ແບ່ງຄວາມຮັບຜິດຊອບໃຫ້ພະນັກງານ ໄອຍະການປະຊາຊົນ ແຕ່ລະທ່ານໃຫ້ຕິດຕາມໃກ້ຊິດ ແລະ ກະຕຸກຊຸກຍູ້ ພະນັກງານວິຊາການໃນການແກ້ໄຂວຽກງານ ວິຊາສະເພາະ ເພື່ອເປັນການກໍ່ສ້າງວິຊາການ ແລະ ຮັບປະກັນການແກ້ໄຂວຽກງານໃຫ້ໄດ້ຮັບຜົນສຳເລັດຕາມຄາດໝາຍ.

VI. ທິດທາງແຜນການເຄື່ອນໄຫວໃນເດືອນ 04/2017

- ສືບຕໍ່ສຶກສາອົບຮົມວຽກງານແນວຄິດ ແລະ ເຕົ້າໂຮມຄວາມສາມັກຄີພະນັກງານຢູ່ພາຍໃນກົມ ແລະ ທົ່ວ ອອປສ ໃຫ້ມີຄວາມສາມັກຄີຢ່າງໜຽວແໜ້ນເປັນປຶກແຜ່ນ ພ້ອມກັນຈັດຕັ້ງປະຕິບັດວຽກງານໃຫ້ສຳເລັດຕາມແຜນການ;
- ສືບຕໍ່ຜ່ານຄະດີຂັ້ນພະແນກໃຫ້ໄດ້ຢ່າງໜ້ອຍ ອາທິດລະ 02 ຄັ້ງ;
- ສືບຕໍ່ຜ່ານຄະດີຂັ້ນກົມໃຫ້ໄດ້ຢ່າງໜ້ອຍອາທິດລະ 02 ຄັ້ງ ຕໍ່ໜຶ່ງພະແນກ;
- ສືບຕໍ່ຜ່ານຄະດີຮ່ວມກັບຄະນະນຳອອປສ ບໍ່ໃຫ້ຫຼຸດ 03 ຄັ້ງ/ເດືອນ;
- ສືບຕໍ່ຜ່ານຄະດີຮ່ວມກັບຫຼາຍພາກສ່ວນ ບໍ່ໃຫ້ຫຼຸດ 02 ຄັ້ງ/ເດືອນ;
- ສູ້ຊົນໃນການແກ້ໄຂຄະດີ ຮັກສາ 2 ຕິວເລກ ແລະ ມີລັກສະນະຫຼຸດລົງໃນເດືອນຕໍ່ໄປ, ໂດຍສະເພາະແມ່ນ ຄະດີຂັ້ນລົບລ້າງ ແລະ ຄະດີທີ່ຄ້າງແຕ່ປີ 2014 ເປັນບຸລິມະສິດ;
- ຈັດຝຶກອົບຮົມສ້າງຄວາມເຂັ້ມແຂງໃຫ້ພະນັກງານໄອຍະການປະຊາຊົນໃນການດຳເນີນຄະດີແພ່ງ ຢູ່ແຂວງພາກ ກາງ ຈັດຢູ່ແຂວງ ຫຼວງພະບາງ;
- ປັບປຸງເອກະສານທີ່ຈະຝຶກອົບຮົມວຽກງານຄະດີແພ່ງຈຳນວນໜຶ່ງຢູ່ ແຂວງ ພາກກາງ;
- ຂຶ້ນແຜນຂໍງົບປະມານສົ່ງໃຫ້ກົມແຜນການ ແລະ ຮ່ວມມືກັບຕ່າງປະເທດ ເພື່ອເປີດຊຸດອົບຮົມຢູ່ພາກກາງ;
- ກະກຽມລົງເກັບກຳຂໍ້ມູນຢູ່ທ້ອງຖິ່ນຈຳນວນໜຶ່ງ.

ຫົວໜ້າກົມຕິດຕາມກວດກາການດຳເນີນຄະດີແພ່ງ

☞ <u>ບ່ອນສົ່ງ</u> :

- ຄະນະນຳ ອອປສທ່ານລະ 01 ສະບັບ;
- ຄະນະກົມທ່ານລະ 01 ສະບັບ;
- ຫົວໜ້າພະແນກ ທ່ານລະ 01 ສະບັບ;
- ທ້ອງການ (ພະແນກສັງລວມ) 01 ສະບັບ;
- ສຳເນົາກົມ 01 ສະບັບ.